ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ...1618.../ອຊ

ອຸດົມໄຊ, ວັນທີ .06.ພະຈິກ 2024

## ຄຳແນະນຳ

## ກ່ຽວກັບ ການຂຶ້ນທະບຽນເລກໝາຍໂທລະສັບ ຢູ່ແຂວງອຸດົມໄຊ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 32/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງ ເຕັກໂນໂລຊີ ແລະ ການສື່ສານ ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ ສະບັບເລກທີ 2347/ກຕສ, ລົງວັນທີ 30 ສິງຫາ 2023;
- ອີງຕາມ ໜັງສືສະເໜີ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 937/ພຕສ, ລົງວັນທີ 09 ຕຸລາ 2024.

## ເຈົ້າແຂວງ ອອກຄຳແນະນຳ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**1. ຈຸດປະສົງ**

1) ເພື່ອເຮັດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໃຫ້ບໍລິການ ແລະ ນຳໃຊ້ເລກໝາຍໂທລະສັບ ຢູ່ແຂວງອຸດົມໄຊ ໄດ້ຮັບຮູ້, ເຂົ້າໃຈ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດການຂຶ້ນທະບຽນເລກໝາຍໂທລະສັບ ຢ່າງເລິກເຊິ່ງ;
2) ເພື່ອເຮັດໃຫ້ການຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ເລກໝາຍໂທລະສັບເຂົ້າສູ່ລະບົບຖານຂໍ້ມູນໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ຮັບປະກັນໃຫ້ແກ່ການນຳໃຊ້ເລກໝາຍໂທລະສັບ ມີຄວາມເປັນລະບຽບ ຮຽບຮ້ອຍ ແລະ ມີຄວາມປອດໄພໃນສັງຄົມ;
3) ແນໃສ່ເປັນຂໍ້ມູນພື້ນຖານ ເພື່ອຮັບຮອງການນຳໃຊ້ ແລະ ພັດທະນາເຕັກໂນໂລຊີດີຈີຕອນ, ຮັບປະກັນໃຫ້ແກ່ການພັດທະນາລັດຖະບານດີຈີຕອນ, ເສດຖະກິດດີຈີຕອນ ແລະ ສັງຄົມດີຈີຕອນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ປະກອບສ່ວນສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງແຂວງອຸດົມໄຊ.

**2. ການຂຶ້ນທະບຽນເລກໝາຍໂທລະສັບ**

ການຂຶ້ນທະບຽນເລກໝາຍໂທລະສັບ ແມ່ນການບັນທຶກຂໍ້ມູນຂອງຜູ້ໃຊ້ບໍລິການເລກໝາຍໂທລະສັບ ທີ່ເປັນແບບລາຍເດືອນ, ແບບຕື່ມເງິນທີ່ມີເລກລະຫັດຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ ທີ່ມີເລກລະຫັດຂຶ້ນຕົ້ນດ້ວຍ 030 ຂອງຜູ້ໃຫ້ບໍລິການໂທລະສັບ ແລະ ອິນເຕີເນັດ.

**3. ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຄໍາແນະນໍາສະບັບນີ້ ມີຄວາມໝາຍ ດັ່ງນີ້:

1) ເລກໝາຍໂທລະສັບ ໝາຍເຖິງ ຕົວເລກທີ່ມີຄວາມໝາຍບົ່ງບອກເຖິງ ລະຫັດປະເທດ, ລະຫັດແຂວງ, ລະຫັດເຄືອຂ່າຍໂທລະຄົມມະນາຄົມ ແລະ ເລກໝາຍຂອງຜູ້ໃຊ້ບໍລິການ;
2) ຜູ້ໃຊ້ບໍລິການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນໍາໃຊ້ ການບໍລິການໂທລະຄົມມະນາຄົມ ທຸກລະບົບ ທີ່ມີອາຍຸ 15 ປີ ຂຶ້ນໄປ ທີ່ມີສິດຖືບັດປະຈໍາຕົວປະຊາຊົນລາວ;
3) ຜູ້ໃຫ້ບໍລິການ ໝາຍເຖິງ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ໄດ້ຮັບອະນຸຍາດປະກອບກິດຈະການ ໂທລະຄົມມະນາຄົມ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
4) ປ່ອງບໍລິການ ໝາຍເຖິງ ຫ້ອງການ ຫຼື ສະຖານທີ່ ທີ່ໄດ້ຮັບສິດ ແລະ ພັນທະຈາກຜູ້ໃຫ້ ບໍລິການໃນການຈໍາໜ່າຍ ແລະ ຂຶ້ນທະບຽນເລກໝາຍໂທລະສັບ ແລະ ອິນເຕີເນັດ;
5) ຕົວແທນຈໍາໜ່າຍ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ເຮັດສັນຍາຈໍາໜ່າຍເລກໝາຍໂທລະສັບ ຮ່ວມກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສາຂາແຂວງອຸດົມໄຊ ແລະ ໄດ້ຮັບການອອກໃບອະນຸຍາດ ຈາກພະແນກ ເຕັກໂນໂລຊີ ແລະ ການສື່ສານ;
6) ຂໍ້ມູນການຂຶ້ນທະບຽນ ໝາຍເຖິງ ຂໍ້ມູນສ່ວນບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ຜູ້ນໍາໃຊ້ເລກໝາຍໂທລະສັບ ປະກອບມີ: ຊື່, ນາມສະກຸນ, ວັນເດືອນປີເກີດ, ທີ່ຢູ່, ຮູບຖ່າຍຕົວຈິງ, ເລກໝາຍໂທລະສັບ, ປະເພດ ບໍລິການ, ສໍາເນົາເອກະສານໃດໜຶ່ງ ເຊັ່ນ: ບັດປະຈໍາຕົວ, ສໍາມະໂນຄົວ, ໜັງສືຜ່ານແດນ ແລະ ຂໍ້ມູນອື່ນໆ ຕາມການກໍານົດຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
7) ລະບົບຂຶ້ນທະບຽນເລກໝາຍໂທລະສັບ ໝາຍເຖິງ ໂປຣແກຣມ ທີ່ພັດທະນາຂຶ້ນ ເພື່ອບັນທຶກຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ເປັນຕົ້ນ ແອບພຣິເຄຊັນ ແລະ ຊອບແວ.

## ໝວດທີ 2
## ການຂຶ້ນທະບຽນເລກໝາຍໂທລະສັບ

**1. ການຂຶ້ນທະບຽນ ແລະ ປະເພດເລກໝາຍທີ່ຕ້ອງຂຶ້ນທະບຽນ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຄື່ອນໄຫວຢູ່ພາຍໃນແຂວງອຸດົມໄຊ ທີ່ມີຈຸດປະສົງນໍາໃຊ້ເລກໝາຍໂທລະສັບຂອງ ສປປ ລາວ ລວມທັງເລກໝາຍເກົ່າທີ່ນໍາໃຊ້ແລ້ວ ແລະ ເລກໝາຍໃໝ່ທີ່ຈະເປີດນໍາໃຊ້ ຕ້ອງໄດ້ຂຶ້ນທະບຽນ ແລະ ປະກອບເອກະສານໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ຕາມຄໍາແນະນໍາສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຈຶ່ງອະນຸຍາດໃຫ້ຜູ້ໃຫ້ບໍລິການເປີດໃຫ້ນໍາໃຊ້ໄດ້.

ການຂຶ້ນທະບຽນເລກໝາຍໂທລະສັບ ຕ້ອງຮັບປະກັນໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຖືກຕ້ອງ, ຄົບຖ້ວນ, ປອດໄພ ແລະ ຮັກສາຄວາມລັບຂໍ້ມູນ ແລະ ບໍ່ໃຫ້ເກີດມີການເກັບຄ່າບໍລິການໃດໆ ຈາກຜູ້ໃຊ້ບໍລິການເລກໝາຍໂທລະສັບ ແລະ ຕ້ອງປະຕິບັດຕາມຂັ້ນຕອນການຂຶ້ນທະບຽນ ໂດຍນໍາໃຊ້ລະບົບຂຶ້ນທະບຽນເລກໝາຍໂທລະສັບ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກໍານົດໄວ້ໃນລະບຽບການສະເພາະ.

ບຸກຄົນທີ່ມີອາຍຸຕໍ່າກວ່າ 15 ປີ ຜູ້ປົກຄອງຕ້ອງເປັນຜູ້ຂຶ້ນທະບຽນເລກໝາຍໂທລະສັບໃຫ້ນໍາໃຊ້.

ປະເພດເລກໝາຍໂທລະສັບທີ່ຕ້ອງຂຶ້ນທະບຽນ ປະກອບມີ:

1) ເລກໝາຍໂທລະສັບມືຖື ທັງແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດຂຶ້ນຕົ້ນດ້ວຍ 020 (ລວມທັງບໍລິການສຽງ ແລະ ບໍລິການອິນເຕີເນັດ);
2) ເລກໝາຍໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດຂຶ້ນຕົ້ນດ້ວຍ 030.

**2. ວິທີການຂຶ້ນທະບຽນເລກໝາຍໂທລະສັບ**

ວິທີການຂຶ້ນທະບຽນເລກໝາຍໂທລະສັບ ຢູ່ແຂວງອຸດົມໄຊ ມີ ສອງ ວິທີ ດັ່ງນີ້:

1) ຂຶ້ນທະບຽນເລກໝາຍໂທລະສັບ ຢູ່ສາຂາ, ປ້ອງບໍລິການ ຫຼື ຈຸດບໍລິການເຄື່ອນທີ່ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຫຼື ຈຸດບໍລິການອື່ນໆ ທີ່ໄດ້ຮັບອະນຸຍາດຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ;
2) ຂຶ້ນທະບຽນເລກໝາຍໂທລະສັບດ້ວຍຕົນເອງ ຜ່ານພຣັດຟອມທາງອອນລາຍ ເຊັ່ນ: ແອັບພລິເຄຊັນ 3 ແກ້ັບ ( https://simreg.gov.la/ ), Lao KYC, One Grab (LTC), Lao App (Unitel), ETL KYC (ETL) ແລະ ພຣັດຟອມອອນລາຍອື່ນໆ ທີ່ໄດ້ຮັບອະນຸຍາດຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ ເຊິ່ງມີຂັ້ນຕອນລະອຽດຢູ່ໃນເອກະສານຊ້ອນທ້າຍ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງອໍານວຍຄວາມສະດວກ ດ້ານສະຖານທີ່ ແລະ ລະບົບປະຕິບັດການຂຶ້ນທະບຽນເລກໝາຍໂທລະສັບ ແລະ ອິນເຕີເນັດ ໃຫ້ແກ່ຜູ້ໃຊ້ບໍລິການຂອງເຄືອຂ່າຍຕົນໃຫ້ສາມາດຂຶ້ນທະບຽນເລກໝາຍໂທລະສັບ ແລະ ອິນເຕີເນັດ ໄດ້ຢ່າງສະດວກ, ວ່ອງໄວ ແລະ ທັນເວລາ. ຖ້າເລກໝາຍໂທລະສັບໃໝ່ທີ່ຍັງບໍ່ທັນຂຶ້ນທະບຽນ ແມ່ນບໍ່ອະນຸຍາດໃຫ້ເປີດນໍາໃຊ້ຢ່າງເດັດຂາດ.

ຜູ້ນໍາໃຊ້ເລກໝາຍໂທລະສັບເກົ່າທີ່ນໍາໃຊ້ແລ້ວ ແຕ່ຍັງບໍ່ທັນຂຶ້ນທະບຽນຖືກຕ້ອງ ຈະຖືກປິດການນໍາໃຊ້ຊົ່ວຄາວ ຫຼື ຖາວອນ ແລະ/ຫຼື ຖ້າຫາກກວດກາພົບເຫັນຈະຖືກປະຕິບັດມາດຕະການປັບໃໝຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີທີ່ເລກໝາຍໂທລະສັບທີ່ຖືກປິດການນໍາໃຊ້ຊົ່ວຄາວ ຫາກມາຂຶ້ນທະບຽນຖືກຕ້ອງ ພາຍໃນເວລາ 01 ເດືອນ ຈະຕ້ອງໄດ້ເສຍຄ່າບໍລິການທີ່ກ່ຽວຂ້ອງ, ສໍາລັບເລກໝາຍໂທລະສັບທີ່ຖືກປິດການນໍາໃຊ້ຊົ່ວຄາວ ແລະ ບໍ່ມາຂຶ້ນທະບຽນຖືກຕ້ອງ ເກີນເວລາ 03 ເດືອນ ຈະຖືກປິດຖາວອນ ແລະ ບໍ່ສາມາດເປີດນໍາໃຊ້ຄືນໃໝ່ໄດ້.

**3. ເອກະສານການຂຶ້ນທະບຽນເລກໝາຍໂທລະສັບ.**

ປະເພດເອກະສານທີ່ນໍາມາຂຶ້ນທະບຽນເລກໝາຍໂທລະສັບ ປະກອບມີເອກະສານໃດໜຶ່ງ ດັ່ງນີ້:

1) ສໍາລັບບຸກຄົນ ຕ້ອງນໍາໃຊ້ເອກະສານໃດໜຶ່ງ ທີ່ຍັງບໍ່ໝົດອາຍຸການນໍາໃຊ້ ດັ່ງລຸ່ມນີ້:

- 1.1. ບັດປະຈໍາຕົວ;
- 1.2. ສໍາມະໂນຄົວ;
- 1.3. ໜັງສືຜ່ານແດນ;
- 1.4. ບັດປະຈໍາຕົວພະສົງ;
- 1.5. ບັດປະຈໍາຕົວຕ່າງດ້າວ;
- 1.6. ສໍາມະໂນຄົວພະສົງ;
- 1.7. ສໍາມະໂນຄົວຕ່າງດ້າວ;
- 1.8. ບັດລັດຖະກອນ;
- 1.9. ບັດພະນັກງານບໍານານ;
- 1.10. ບັດປະຈໍາຕົວນັກສຶກສາ;
- 1.11. ໃບຂັບຂີ່ຍານພາຫະນະ;
- 1.12. ໃບຢັ້ງຢືນທີ່ຢູ່ຈໍ້າໂປ້ລາຍນິ້ວມື.

2) ສຳລັບນິຕິບຸກຄົນ ຕ້ອງປະກອບເອກະສານ ດັ່ງນີ້:

2.1. ໃບມອບສິດ ຈາກອຳນວຍການບໍລິສັດ ໃຫ້ບຸກຄົນໃດໜຶ່ງຕາງໜ້າມາຂຶ້ນທະບຽນ;

2.2. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ຂອງຜູ້ອຳນວຍການບໍລິສັດ;

2.3. ຮູບຖ່າຍຂອງຜູ້ອຳນວຍການຂະໜາດ 3x4 ຈຳນວນ 2 ໃບ;

2.4. ສຳເນົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການມອບອາກອນ;

2.5. ແຈ້ງລາຍການເລກໝາຍໂທລະສັບ ພ້ອມຂໍ້ມູນຂອງຜູ້ທີ່ຈະຊົມໃຊ້ໃຫ້ຄົບຖ້ວນ ເຊັ່ນ: ຊື່ ແລະ ນາມສະກຸນ, ວັນເດືອນປີເກີດ, ເພດ, ທີ່ຢູ່ປະຈຸບັນ, ຕຳແໜ່ງງານ.

3). ສຳລັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຕ້ອງປະກອບເອກະສານ ດັ່ງນີ້:

3.1. ໜັງສືສະເໜີເປັນທາງການ ຈາກອົງການຈັດຕັ້ງ;

3.2. ແຈ້ງລາຍການເລກໝາຍໂທລະສັບ ພ້ອມທັງຂໍ້ມູນຂອງຜູ້ທີ່ນຳໃຊ້ຢ່າງຄົບຖ້ວນ ເຊັ່ນ: ຊື່ ແລະ ນາມສະກຸນ, ເພດ, ວັນເດືອນປີເກີດ, ທີ່ຢູ່ປະຈຸບັນ, ຕຳແໜ່ງ, ໜ້າທີ່ຮັບຜິດຊອບ;

3.3. ສຳເນົາເອກະສານໃດໜຶ່ງ ຂອງຫົວໜ້າອົງການຈັດຕັ້ງທີ່ມອບສິດຂຶ້ນທະບຽນເລກໝາຍໂທລະສັບ ເຊັ່ນ: ບັດປະຈຳຕົວ, ສຳມະໂນຄົວ, ໜັງສືຜ່ານແດນ, ໃບຢັ້ງຢືນທີ່ຢູ່;

3.4. ຮູບຖ່າຍຂອງຫົວໜ້າອົງການຈັດຕັ້ງຂະໜາດ 3x4 ຈຳນວນ 2 ໃບ.

## ໝວດທີ 3

## ອົງການຄຸ້ມຄອງ, ຕິດຕາມກວດກາ, ການເກັບຮັກສາຂໍ້ມູນ ແລະ ລາຍງານການຂຶ້ນທະບຽນເລກໝາຍໂທລະສັບ

### 1. ອົງການຄຸ້ມຄອງ, ຕິດຕາມກວດກາການຂຶ້ນທະບຽນເລກໝາຍໂທລະສັບ.

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບ ຢູ່ແຂວງອຸດົມໄຊ ໂດຍມອບໃຫ້ ພະແນກເຕັກໂນໂລຊີ ແລະ ການສື່ສານ ເປັນເສນາທິການ ແລະ ເປັນເຈົ້າການຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ.

### 2. ການເກັບຮັກສາຂໍ້ມູນ ແລະ ລາຍງານການຂຶ້ນທະບຽນເລກໝາຍໂທລະສັບ

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງຮັບປະກັນ ການເກັບຮັກສາຖານຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບຂອງຜູ້ນຳໃຊ້ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ, ປອດໄພ ແລະ ປິດລັບ, ຮັບປະກັນຄວາມປອດໄພການເຊື່ອມຕໍ່ ແລະ ການນຳໃຊ້ຢ່າງມີປະສິດທິພາບ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດຕ້ອງສົ່ງບົດລາຍງານຜົນການຈຳໜ່າຍ, ການນຳໃຊ້ ແລະ ການຂຶ້ນທະບຽນເລກໝາຍໂທລະສັບຂອງເຄືອຂ່າຍຕົນເປັນທາງການໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ທຸກໆ ເດືອນ ບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ.

### 3. ການແຈ້ງບັນຫາການລົງທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຄື່ອນໄຫວຢູ່ພາຍໃນແຂວງອຸດົມໄຊ ໃນການລົງທະບຽນເລກໝາຍໂທລະສັບ ຢູ່ແຂວງອຸດົມໄຊ ຫາກພົບບັນຫາຄວາມຫຍຸ້ງຍາກ ເປັນຕົ້ນແມ່ນ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ບໍ່ອຳນວຍຄວາມສະດວກ, ເມີນເສີຍຕໍ່ຄວາມຮັບຜິດຊອບຂອງການລົງທະບຽນ, ບໍ່ຮັກສາຄວາມລັບຂໍ້ມູນສ່ວນຕົວຂອງລູກຄ້າ ຫຼື ພົບເຫັນຄວາມບໍ່ໂປ່ງໃສໃນການລົງທະບຽນ ເຊັ່ນ: ມີການຮຽກເກັບຄ່າບໍລິການລົງທະບຽນ, ມີການຮັບຈ້າງລົງທະບຽນແທນບຸກຄົນອື່ນ, ຈຳໜ່າຍເລກໝາຍໂທລະສັບທີ່ລົງທະບຽນສຳເລັດແລ້ວໃຫ້ລູກຄ້າອື່ນນຳໃຊ້ ແລະ ບັນຫາອື່ນໆ ທີ່ກ່ຽວຂ້ອງ ໃຫ້ແຈ້ງບັນຫາໃຫ້ພະແນກ ເຕັກໂນໂລຊີ ແລະ ການສື່ສານ ຜ່ານຊ່ອງທາງ ດັ່ງນີ້:

1) ແຈ້ງເປັນລາຍລັກອັກສອນ ຫາພະແນກ ເຕັກໂນໂລຊີ ແລະ ການສື່ສານ ສຳນັກງານຕັ້ງຢູ່ບ້ານດອນໄຊ ເມືອງ ໄຊ ແຂວງອຸດົມໄຊ;
2) ແຈ້ງຜ່ານທາງໂທລະສັບ ໝາຍເລກ 081 312 508 ;
3) ແຈ້ງຜ່ານຊ່ອງທາງອອນລາຍ ຄື: ຜ່ານເວັບໄຊ www.dtc-odx.gov.la ແລະ ຈົດໝາຍເອເລັກໂຕຣນິກ dtc@ou.gov.la .

## ໝວດທີ 4
## ບົດບັນຍັດສຸດທ້າຍ

### 1. ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການສົມທົບກັບບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ພາຍໃນແຂວງ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມຄຳແນະນຳສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

### 2. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ທ່ານ. ເຈົ້າແຂວງ

ອ່ອນແກ້ວ ອຸ່ນອາລົມ

# ເອກະສານຊ້ອນທ້າຍ

1. ເອກະສານຊ້ອນທ້າຍ 01: ຄູ່ມືການນຳໃຊ້ແອັບ LaoKYC
   ( https://simreg.gov.la/pdf/lao_kyc_app.pdf )
2. ເອກະສານຊ້ອນທ້າຍ 02: ຄູ່ມືການນຳໃຊ້ OneGrab
   ( https://onegrab.laotel.com/image_bb/one%20grab.pdf )
3. ເອກະສານຊ້ອນທ້າຍ 03: ຄູ່ມືການນຳໃຊ້ແອັບ ETL KYC
   ( https://www.etllao.com/?page_id=30299 )
4. ເອກະສານຊ້ອນທ້າຍ 04: ຄູ່ມືການນຳໃຊ້ແອັບ LaoAPP (Unitel)
   ( https://www.unitel.com.la/ )